# ວ່າດ້ວຍໜັງສືຜູ້ທຳນວາຍ

ຕາມພາສາເຮັບເຣີທຳນວາຍແປວ່າ "ປະກາດ" ແຕ່ທ່ານໂອກຸສຕິນ (Augustine) ເອີ້ນຜູ້ທຳນວາຍວ່າ "ຜູ້ປະກາດພຣະທັມຂອງພຣະເຈົ້າແກ່ຄົນທັງຫລາຍ" ແລະຍັງມີຄຳເອີ້ນອື່ນ ໆ ອີກເຊັ່ນ "ຜູ້ເຫັນຮຸ່ງ" ໑ ຊາເໝືອນ ໙:໙ ເພາະຜູ້ທຳນວາຍມີຄວາມສາມາດເຫັນສິ່ງທີ່ຕາບໍ່ເຫັນ ຜູ້ທຳນວາຍ ຄືຜູ້ທີ່ ພຣະເຈົ້າ ຊົງໃຊ້ ໃຫ້ປ່າວ ປະກາດ ພຣະທັມ ຂອງພຣະອົງ (໒ ເປໂຕ ໑:໒໑)

## ການແບ່ງເປັນພາກ

ໜັງສືຜູ້ທຳນວາຍແບ່ງເປັນສອງພາກດັ່ງນີ້

ພາກທີ ໑ ວ່າດ້ວຍຜູ້ທຳນວາຍທີ່ໃຫຍ່ແລະສຳຄັນ ໔ ຄົນຄື ເອເຊອີ, ເຢເຣມີ, ເອເຊກຽນ, ແລະດານຽນ

ພາກທີ ໒ ວ່າດ້ວຍຜູ້ທຳນວາຍທີ່ນ້ອຍ ໑໒ ຄົນຄືນັບຕັ້ງແຕ່ ໂອເຊເຖິງ ມາຣະກີ

## ວ່າດ້ວຍຄາວຂອງຜູ້ທຳນວາຍ

ຄາວສໄໝ ທີ່ພວກຜູ້ທຳນວາຍ ໄດ້ດຳເນີນ ຊີວິດຢູ່ມີ ໓ ຄາວດ້ວຍກັນຄື

໑. ຄາວພວກອິສຣາເອັນຖືກແບ່ງເປັນສອງພາກ

ກ. ຝ່າຍຕະກຸນຢຸດາ ຄື ໂຍເອນ ເອຊາອີ ນາຫຸມ

ຂ. ຝ່າຍ ໑໐ ຕະກຸນ ຄື ໂຍນາ ອາໂມດ ໂອເຊ

໒. ຄາວບີແຕ່ຕະກຸນຢຸດາ ຄື ໄຊໂຟນີ ຫາບາກຸກ ເຢເຣມີ ອາບ
ເດັຍເຊ ເອເຊກຽນ

໓. ຄາວຖືກເນຣະເທດ ຄື ດານຽນ ອາກເກ ຊາກາລີ ມາຣະກີ